ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກີລາ

ກົມການສຶກສານອກໂຮງຮຽນ

ບົດສະຫຼຸບ
ການຈັດຕັ້ງປະຕິບັດແຜນພັດທະນາການສຶກສານອກໂຮງຮຽນ ປະຈຳປີ 2020-2021 ແລະ ແຜນການພັດທະນາການສຶກສານອກໂຮງຮຽນ ປີ 2021-2022

ພຶດສະພາ 2021

1. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາການສຶກສານອກໂຮງຮຽນ ປະຈຳສົກປີ 2020-2021

1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

1.1.1. ວຽກງານການສຶກສາຕໍ່ເນື່ອງ

ໂດຍປະຕິບັດຕາມແຜນພັດທະນາການສຶກສານອກໂຮງຮຽນ ປະຈຳສົກປີ 2020-2021 ທີ່ມີຈຸດມຸ່ງໝາຍ ເພື່ອເພີ່ມອັດຕາການຮູ້ໜັງສືຂອງປະຊາຊົນລາວບັນດາເຜົ່າ ໃຫ້ຫຼາຍຂຶ້ນ ແລະ ຂະຫຍາຍການສຶກສາໃຫ້ເຂົ້າເຖິງກຸ່ມເປົ້າໝາຍ ຜູ້ທີ່ບໍ່ຮູ້ໜັງສື, ຜູ້ທີ່ປະລະຈາກໃນໂຮງຮຽນ (ສາຍສາມັນ), ຜູ້ທີ່ບໍ່ມີໂອກາດຮຽນໜັງສື ໃຫ້ໄດ້ເຂົ້າຮຽນຫຼາຍຂຶ້ນ; ໂດຍຜ່ານຮູບແບບການຈັດຕັ້ງການຮຽນ-ການສອນ ລົບລ້າງຄວາມບໍ່ຮູ້ໜັງສື ແລະ ການບຳລຸງຍົກລະດັບການສຶກສາຊັ້ນຕ່າງໆ ເຊິ່ງສາມາດປະຕິບັດ ໄດ້ດັ່ງລາຍລະອຽດລຸ່ມນີ້:

1) ປະຊາກອນກຸ່ມເປົ້າໝາຍໄວເດັກ ອາຍຸ 6-14 ປີ ທີ່ບໍ່ມີໂອກາດ ແລະ ພາດໂອກາດທາງການສຶກສາ ຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດບໍ່ມີໂຮງຮຽນ ໃນທົ່ວປະເທດ ໄດ້ເຂົ້າຮຽນບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມສຳເລັດ ຈຳນວນ 2,132 ຄົນ, ຍິງ 1,139 ຄົນ, ທຽບໃສ່ຄາດໝາຍ (3,000 ຄົນ) ບັນລຸໄດ້ 71.06%.
2) ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ທີ່ກຶກໜັງສື, ປະລະການຮຽນໃນໂຮງຮຽນ ແລະ ພາດໂອກາດທາງການສຶກສາ ໄດ້ຮຽນຈົບລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມ ຈຳນວນ 15,550 ຄົນ, ຍິງ 8,503 ຄົນ ທຽບໃສ່ຄາດໝາຍ (12,000 ຄົນ) ບັນລຸໄດ້ 129.58%.
3) ປະຊາກອນໄວໜຸ່ມກຸ່ມເປົ້າໝາຍ ອາຍຸ 15-35 ປີ ທີ່ປະລະການຮຽນຈາກສາຍສາມັນສຶກສາ ແລະ ຜູ້ທີ່ຈົບຈາກຊັ້ນປະຖົມບຳລຸງ ໄດ້ຮຽນຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ຈຳນວນ 8,258 ຄົນ, ຍິງ 3,626 ຄົນ ທຽບໃສ່ຄາດໝາຍ (28,000 ຄົນ) ບັນລຸໄດ້ 29.49%.
4) ໃນສົກປີນີ້ ໄດ້ປະກາດເປັນເມືອງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ສຳເລັດ 01 ເມືອງ (ເມືອງຊານໄຊ ແຂວງອັດຕະປື) ແລະ ປະກາດເປັນແຂວງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ສຳເລັດ 04 ແຂວງ (ແຂວງຜົ້ງສາລີ, ຫຼວງພະບາງ ສະຫວັນນະເຂດ, ຈຳປາສັກ).
   - ນັບແຕ່ປີ 2011 ເຖິງປະຈຸບັນ ໄດ້ສຳເລັດປະກາດເປັນເມືອງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ 145 ເມືອງ ແລະ 3 ນະຄອນ ໃນທົ່ວປະເທດ; ມີຜູ້ຮຽນຈົບທັງໝົດ 225,561 ຄົນ, ຍິງ 109,009 ຄົນ[1]. ສຳລັບການປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວແຂວງ ໄດ້ສຳເລັດ 15 ແຂວງ ແລະ ນະຄອນຫຼວງ; ສຳລັບແຂວງໄຊສົມບູນ ແລະ ອັດຕະປື ໄດ້ສຳເລັດການຈັດຕັ້ງການຮຽນ-ການສອນແລ້ວ ຍັງລໍຖ້າປະກາດຢ່າງເປັນທາງການ.
5) ການບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍ (ມ.5, ມ.6, ມ.7) ໄດ້ຈັດການຮຽນ-ການສອນ ຢູ່ຕາມສະຖານການສຶກສານອກໂຮງຮຽນ ທັງໝົດ 53 ແຫ່ງ (ໃນ 16 ແຂວງ ແລະ ນະຄອນຫຼວງ) ມີຜູ້ຮຽນທັງໝົດ 4,183 ຄົນ, ຍິງ 1,378 ຄົນ *(ບໍ່ສາມາດລາຍງານຈຳນວນຜູ້ຮຽນຈົບໄດ້ ເພາະຍັງບໍ່ທັນໄດ້ຈັດຕັ້ງການສອບເສັງຈົບຊັ້ນ).*

[1] ສະຖິຕິຜູ້ຮຽນຈົບແມ່ນສັງລວມໃນບົດສະຫຼຸບພິທີປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ແຕ່ລະເມືອງ

1.1.2. ວຽກງານການສົ່ງເສີມວິຊາຊີບຂັ້ນພື້ນຖານ

ການສົ່ງເສີມວຽກງານຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໄດ້ຖືກດຳເນີນຄວບຄູ່ກັບການຈັດຕັ້ງການຮຽນ-ການສອນບຳລຸງຍົກລະດັບການສຶກສາ ໃຫ້ກັບປະຊາກອນໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ແລະ 40 ປີຂຶ້ນໄປ ທີ່ສົນໃຈຢາກຝຶກວິຊາຊີບ ເພື່ອປະກອບອາຊີບໃນທ້ອງຖິ່ນ ແລະ ຕ້ອງການພັດທະນາທັກສະສີມືແຮງງານໃຫ້ມີຄວາມຊຳນິຊຳນານ ໃຫ້ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດແຮງງານໃນໄລຍະໃໝ່. ເຊິ່ງໃນສົກຮຽນນີ້, ມີຜູ້ສຳເລັດການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃນສາຂາວິຊາຊີບ (ສາຂາປູກຝັກ, ລ້ຽງສັດ, ຕັດຫຍິບ, ປຸງແຕ່ງອາຫານ, ເສີມສວຍ, ການບໍລິການ ແລະ ໂຮງແຮມ, ຊ່າງໄມ້) ຈຳນວນ 3,161 ຄົນ, ຍິງ 1,649 ຄົນ; ເຊິ່ງໃນນີ້ແມ່ນລວມເອົາທັງປະຊາຊົນກຸ່ມເປົ້າໝາຍຂອງບ້ານສາມສ້າງ ຂອງເມືອງສຳພັນ ແຂວງຜົ້ງສາລີ ຈຳນວນ 35 ຄົນ, ຍິງ 20 ຄົນ.

1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ຂະແໜງການຍ່ອຍການສຶກສານອກໂຮງຮຽນ ກໍໄດ້ໃຫ້ຄວາມສຳຄັນຕໍ່ກັບການປັບປຸງດ້ານຄຸນນະພາບການຮຽນ-ການສອນບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ມັດທະຍົມ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ການພັດທະນາຮູບແບບການຮຽນ-ການສອນ ເພື່ອໃຫ້ມີຄຸນນະພາບຍັບເຂົ້າໃຫ້ໃກ້ກັບການສຶກສາໃນໂຮງຮຽນເທື່ອລະກ້າວ ເປັນຕົ້ນ ແມ່ນ:

1) ສຳເລັດການປັບປຸງໂຄງຮ່າງຫຼັກສູດຊັ້ນມັດທະຍົມຕອນຕົ້ນບຳລຸງ ສຳລັບປະຊາຊົນ ໂດຍພື້ນຖານ.
2) ໄດ້ຮັບອະນຸມັດນຳໃຊ້ໂຄງຮ່າງຫຼັກສູດວິຊາຊີບ ສາຂາຕັດຫຍິບ ໃນລະດັບຊັ້ນຕົ້ນ (ລະດັບ 1 ແລະ 2) ແລະ ກຳລັງສະເໜີຂໍອະນຸມັດນຳໃຊ້ໂຄງຮ່າງຫຼັກສູດ ສາຂາວິຊາຊີບເສີມສວຍ ລະດັບຊັ້ນຕົ້ນ (ລະດັບ 1 ແລະ 2).
3) ສຳເລັດການກວດແກ້ ແລະ ຮຽບຮຽງປຶ້ມແບບຮຽນ ແລະ ຄູ່ມືຄູ ສຳລັບບຳລຸງຍົກລະດັບການສຶກສາຊັ້ນປະຖົມ (ລະດັບ 3) ແລະ ປຶ້ມແບບຮຽນ ສາຂາວິຊາຊີບປຸງແຕ່ງອາຫານ (ລະດັບ 1).
4) ສຳເລັດການສ້າງ ແລະ ພັດທະນາສື່ການຮຽນ-ການສອນຈຳນວນໜຶ່ງ ເຊັ່ນ:
   - ➢ ວິດີໂອປະກອບການຮຽນ-ການສອນ ວິຊາການສານແອບເຂົ້າ-ພາເຂົ້າ, ການເຮັດຜ້າປິດປາກ, ການເຮັດຝອຍ ແລະ ການເຮັດຝຸ່ນຊີວະພາບ;
   - ➢ ປຶ້ມຄູ່ມືຝຶກອົບຮົມບຸກຄະລາກອນການສຶກສານອກໂຮງຮຽນ, ປຶ້ມຄູ່ມືການສິດສອນຜູ້ໃຫຍ່ ແລະ ເພື່ອສະໜອງໃຫ້ກັບສູນການສຶກສານອກໂຮງຮຽນ ຂັ້ນແຂວງ ແລະ ຂັ້ນເມືອງ.
5) ຝຶກອົບຮົມໃຫ້ພະນັກງານວິຊາການຂອງສູນການສຶກສານອກໂຮງຮຽນ ກ່ຽວກັບການນຳໃຊ້ມາດຕະຖານຄຸນນະພາບການສຶກສານອກໂຮງຮຽນ ເຂົ້າໃນການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດກິດຈະກຳຍ່ອຍ ເຊັ່ນ: ການລົງເກັບກຳຂໍ້ມູນ, ການວິເຄາະ ແລະ ສະຫຼຸບສັງລວມຂໍ້ມູນ ໂດຍອີງໃສ່ຕົວຊີ້ບອກທີ່ກຳນົດໄວ້.
6) ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ຄູຝຶກວິຊາຊີບຂັ້ນພື້ນຖານ ຢູ່ບັນດາແຂວງພາກໃຕ້ ໃນດ້ານວິທີການສິດສອນ ແລະ ເຕັກນິກສຳລັບສາຂາວິຊາຊີບ ໃນສາຂາວິຊາປຸງແຕ່ງອາຫານ, ຕັດຫຍິບ, ປູກຝັງ ແລະ ລ້ຽງສັດ ໄດ້ຈຳນວນ 36 ຄົນ, ຍິງ 16 ຄົນ.

7) ສຳເລັດສ້າງແຜນຕິດຕາມ ແລະ ລາຍງານຜົນ ຄວາມຄືບໜ້າຂອງການຈັດຕັ້ງ ປະຕິບັດແຜນຍຸດທະສາດ, ແຜນການ ປະຈຳປີ ຂອງຂະແໜງການຍ່ອຍການສຶກສານອກໂຮງຮຽນ ຕາມແຜນປະຈຳໄຕມາດ ແລະ ປະຈຳປີ.

1.3. ການບໍລິຫານ ແລະ ຄຸ້ມຄອງ

ໄດ້ປັບປຸງ ແລະ ພັດທະນາ ກ່ຽວກັບການບໍລິຫານ-ຄຸ້ມຄອງ ວຽກງານການສຶກສານອກໂຮງຮຽນ ໃນຫຼາຍດ້ານ ດັ່ງນີ້:

1) ສຳເລັດການພັດທະນາລະບົບສະຖິຕິຖານຂໍ້ມູນການສຶກສານອກໂຮງຮຽນ (ແອບເກັບກຳຂໍ້ມູນທາງອອນລາຍ) ເພື່ອ ໃຫ້ສາມາດເຊື່ອມໂຍງເຂົ້າກັບລະບົບສະຖິຕິຖານຂໍ້ມູນສຶກສາ ແລະ ກີລາ.
2) ເກັບກຳສະຖິຕິສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ທີ່ມີການເຄື່ອນໄຫວ ແລະ ຈັດຕັ້ງ ປະຕິບັດກິດຈະກຳ ເປັນປົກກະຕິ ມີທັງໝົດ 156 ສູນ; ໂດຍແບ່ງເປັນ:
   – ສູນການສຶກສານອກໂຮງຮຽນ ປະຈຳພາກ ມີ 3 ແຫ່ງ;
   – ສູນການສຶກສານອກໂຮງຮຽນ ຂັ້ນແຂວງ ມີ 17 ແຫ່ງ (ລວມນະຄອນຫຼວງ);
   – ສູນການສຶກສານອກໂຮງຮຽນ ຂັ້ນເມືອງ ມີ 41 ແຫ່ງ;
   – ສູນການຮຽນຮູ້ຊຸມຊົນ ມີ 95 ແຫ່ງ;
3) ສ້າງ ແລະ ປັບປຸງນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງ ສຳລັບການຄຸ້ມຄອງວຽກງານການສຶກສານອກໂຮງຮຽນ ເຊັ່ນ:
   – ປັບປຸງ ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການສຶກສານອກໂຮງຮຽນ
   – ປັບປຸງ ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນການສຶກສານອກໂຮງຮຽນ;
   – ສ້າງ (ຮ່າງ) ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງສະຖານການສຶກສາຝຶກອົບຮົມວິຊາຊີບຂັ້ນພື້ນຖານ ພາກເອກະຊົນ;
   – ສ້າງ (ຮ່າງ) ຄຳແນະນຳຂອງລັດຖະມົນຕີວ່າດ້ວຍ ການປະສົມປະສານລະຫວ່າງວຽກງານຝຶກອົບຮົມວິຊາຊີບຂັ້ນ ພື້ນຖານນອກໂຮງຮຽນ ແລະ ວຽກງານການຝຶກອົບຮົມວິຊາຊີບອາຊີວະສຶກສາ;
   – ສ້າງ (ຮ່າງ) ຄຳແນະນຳຂອງລັດຖະມົນຕີວ່າດ້ວຍ ການຮ່ວມມື ແລະ ນຳໃຊ້ຊັບພະຍາກອນຮ່ວມກັນ ລະຫວ່າງ ສູນການສຶກສານອກໂຮງຮຽນ ແລະ ກຸ່ມໂຮງຮຽນສາມັນ.
4) ເກັບກຳສະຖິຕິບຸກຄະລາກອນ ແລະ ຄູສອນ ສຳລັບການສຶກສານອກໂຮງຮຽນ (ຄູສອນອາສາສະໝັກ, ຄູສອນຮັບ ເຊີນ ແລະ ຄູສອນວິຊາຊີບຂັ້ນພື້ນຖານ) ມີດັ່ງນີ້:
   – ຄູອາສາສະໝັກສອນບຳລຸງຍົກລະດັບການສຶກສາຊັ້ນປະຖົມ ຈຳນວນ 1,879 ຄົນ; ແມ່ນນຳໃຊ້ ຄູສອນຈາກ ໂຮງຮຽນສາມັນສຶກສາ, ຄູອາສາສະໝັກຊາວບ້ານ;
   – ຄູສອນບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນບຳລຸງ ຈຳນວນ 6,567 ຄົນ; ແມ່ນນຳໃຊ້ຄູສອນ ຈາກໂຮງຮຽນສາມັນສຶກສາ;

– ຄູສອນບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍບຳລຸງ ຈຳນວນ 496 ຄົນ, ຍິງ 225 ຄົນ ແມ່ນນຳໃຊ້ ຄູສອນທີ່ປະຈຳຢູ່ສູນການສຶກສານອກໂຮງຮຽນ ແລະ ຄູສອນຮັບເຊີນຈາກໂຮງຮຽນສາມັນສຶກສາ.
– ຄູຝຶກວິຊາຊີບຂັ້ນພື້ນຖານ ຈຳນວນ 65 ຄົນ, ຍິງ 40 ຄົນ ແມ່ນນຳໃຊ້ຄູຝຶກວິຊາຊີບ ທີ່ປະຈຳຢູ່ສູນການສຶກສານອກໂຮງຮຽນ ແລະ ຄູຝຶກອາສາສະໝັກມີທັກສະຊຳນິຊຳນານໃນທ້ອງຖິ່ນ ຂອງແຕ່ລະຂົງເຂດ.

5) ສະໜອງສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ສຳລັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ກັບສູນການສຶກສານອກໂຮງຮຽນ ຂັ້ນແຂວງ 05 ແຫ່ງ, ເມືອງ 02 ແຫ່ງ ແລະ ສູນການຮຽນຮູ້ຊຸມຊົນ 02 ແຫ່ງ[2].
6) ສຳລັບງົບປະມານທີ່ສະໜອງໃຫ້ຂະແໜງການຍ່ອຍການສຶກສານອກໂຮງຮຽນ ແມ່ນມາຈາກທັງພາກລັດ ແລະ ຄູ່ຮ່ວມພັດທະນາ ມີດັ່ງລຸ່ມນີ້:

ລ.ດ	ກິດຈະກຳ	ມູນຄ່າ (ລ້ານກີບ)	ແຫຼ່ງທຶນ
1	ອຸດໜູນຄູອາສາສະໝັກ ສອນລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ (ພາກ 61)	1,127.4	ລບ
2	ອຸດໜູນຄູອາສາສະໝັກ ສອນບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ (ພາກ 61)	5,910.3	ລບ
3	ກິດຈະກຳພັດທະນາຂອງຂະແໜງການສຶກສານອກໂຮງຮຽນ (ພາກ 63)		ລບ
4	ສະໜອງສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ສຳລັບສູນ ກສນ	500	ລບ
5	ກິດຈະກຳສົ່ງເສີມວຽກງານບຳລຸງຍົກລະດັບການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ (DVV, UNFPA, UNESCO Korea)	2,719.5	
5.1	ຫ້ອງການນາງຊາດເພື່ອການສຶກສາຜູ້ໃຫຍ່ ເຢຍລະມັນ DVV Interantional	500	
5.2	ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA)	319.5	
5.3	ອົງການອຸຍແນັດສະໂກປະຈຳເກົາຫຼີ (UNESCO Korea)	1,900	

2. ສະພາບບັນຫາ, ສາເຫດ ແລະ ສິ່ງທ້າທາຍ

2.1. ສະພາບບັນຫາ ແລະ ສາເຫດ

ອິງໃສ່ຜົນການລາຍງານ ແລະ ການລົງຊຸກຍູ້-ຕິດຕາມການຈັດຕັ້ງປະຕິບັດວຽກງານການສຶກສານອກໂຮງຮຽນ ໃນສົກປີຜ່ານມາ ສາມາດຕີລາຄາສະພາບບັນຫາ, ຂໍ້ຄົງຄ້າງ, ສາເຫດ ແລະ ສິ່ງທ້າທາຍ ຢູ່ໃນແຕ່ລະແຜນງານ ມີດັ່ງນີ້:

1) ປະຊາກອນກຸ່ມເປົ້າໝາຍໄວເດັກ ອາຍຸ 6-14 ປີ ຈຳນວນຫຼາຍ ທີ່ຢູ່ເຂດຫ່າງໄກສອກຫຼີກ ບໍ່ໄດ້ເຂົ້າຮຽນ.
   - ➢ ການຈັດຕັ້ງການຮຽນ-ການສອນ ບຳລຸງຍົກລະດັບການສຶກສາ ສ່ວນຫຼາຍແມ່ນດຳເນີນຢູ່ແຕ່ເຂດທີ່ມີເງື່ອນໄຂສະດວກ ແລະ ການເກັບກຳຂໍ້ມູນກ່ຶອາໄສແຕ່ການລາຍງານເທົ່ານັ້ນ ເຊິ່ງບໍ່ໄດ້ມີການລົງສຳຫຼວດ ແລະ ເກັບກຳຂໍ້ມູນຕົວຈິງຢູ່ເຂດຫ່າງໄກສອກຫຼີກ.

[2] ລາຍລະອຽດຂອງສື່ການຮຽນ-ການສອນ ແລະ ອຸປະກອນ ແມ່ນຢູ່ເອກະສານຊ້ອນທ້າຍ

2) ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ແລະ ອາຍຸ 40 ປີຂຶ້ນໄປ ຍັງມີຈຳນວນຫຼາຍທີ່ກົກໜັງສື, ບໍ່ມີໂອກາດໄດ້ເຂົ້າຮຽນ ແລະ ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ອາຍຸ 15-35 ປີ ທີ່ບໍ່ສືບຕໍ່ຮຽນຊັ້ນມັດທະຍົມບຳລຸງ.

- ຍັງມີຜູ້ຮຽນຈຳນວນຫຼາຍທີ່ປະລະຈາກສາຍສາມັນສຶກສາ;
- ຢູ່ບາງທ້ອງຖິ່ນບໍ່ໄດ້ສືບຕໍ່ຈັດຕັ້ງການຮຽນ-ການສອນບຳລຸງຊັ້ນປະຖົມ ແລະ ບຳລຸງມັດທະຍົມຕອນຕົ້ນ ພາຍຫຼັງປະກາດຈົບບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ ໄປແລ້ວ;
- ສະພາບຄວາມທຸກຍາກ ເຮັດໃຫ້ປະຊາຊົນຖືເອົາການທຳມາຫາກິນສຳຄັນກວ່າການສຶກສາ.

3) ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃຫ້ປະຊາກອນກຸ່ມເປົ້າໝາຍທີ່ຢູ່ເຂດຫ່າງໄກສອກຫຼີກ, ກຸ່ມເປົ້າໝາຍທີ່ມີຄວາມຕ້ອງການພິເສດ (ຄົນພິການ) ຍັງບໍ່ໄດ້ຈັດຕັ້ງປະຕິບັດຢ່າງທົ່ວເຖິງ.

- ຍ້ອນຄູຝຶກວິຊາຊີບມີໜ້ອຍ ແລະ ຂາດຄູຝຶກໃນຫຼາຍສາຂາວິຊາວິຊາຊີບ;
- ສູນການສຶກສານອກໂຮງຮຽນ ຈຳນວນໜຶ່ງ ແມ່ນຈັດແຕ່ກິດຈັດການຮຽນ-ການສອນບຳລຸງຍົກລະດັບການສຶກສາເທົ່ານັ້ນ.

4) ການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ກັບກຸ່ມເປົ້າໝາຍ ຍັງບໍ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ, ຍັງບໍ່ແທດເໝາະກັບສະພາບເງື່ອນໄຂຄວາມເປັນຈິງຂອງທ້ອງຖິ່ນ ແລະ ບໍ່ທັນມີຫຼາກຫຼາຍສາຂາວິຊາ.

- ຂາດການເກັບກຳຂໍ້ມູນ ແລະ ການປະເມີນ ຄວາມຕ້ອງການດ້ານທັກສະອາຊີບຕໍ່ກັບຕະຫຼາດແຮງງານ, ດ້ານທ່າແຮງທີ່ມີຢູ່ຂອງແຕ່ລະຂົງເຂດ ແລະ ຂາດຄູສອນວິຊາຊີບສາຂາວິຊາຕ່າງໆທີ່ມີປະສົບການສູງ.

5) ການຈັດການຮຽນ-ການສອນບຳລຸງຍົກລະດັບການສຶກສາ ຊັ້ນປະຖົມ, ຊັ້ນມັດທະຍົມ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແມ່ນບໍ່ສາມາດຈັດໃນຮູບແບບອອນລາຍ, ຮູບແບບອອຟລາຍ, ຮູບແບບຊຸດຮຽນ, ຮູບແບບໂທລະພາບ ແລະ ຮູບແບບອື່ນໆ.

- ຫຼັກສູດຍັງບໍ່ທັນໄດ້ປັບປຸງ ແລະ ບໍ່ເໝາະສົມກັບການຮຽນ-ການສອນ ໃນຮູບແບບຕ່າງໆ;
- ຄູສອນ ແລະ ຄູຝຶກ ຍັງບໍ່ເຄີຍໄດ້ຮັບການຝຶກອົບຮົມ ກ່ຽວກັບ ການຈັດການຮຽນ-ການສອນໃນຮູບແບບຕ່າງໆ ມາກ່ອນ;
- ສັນຍານລະບົບເຄືອຂ່າຍອິນເຕີເນັດ ຢູ່ບາງບ່ອນຍັງບໍ່ທັນມີຄຸນນະພາບສູງ (ຮັບສັນຍານ 3G ຫຼື 4G ບໍ່ໄດ້);
- ຂາດງົບປະມານຮັບໃຊ້ສຳລັບການຮຽນ-ການສອນ ໃນຮູບແບບຕ່າງໆ.

6) ການຮຽນ-ການສອນບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມບຳລຸງ ແມ່ນເນັ້ນໃສ່ແຕ່ປະລິມານເພື່ອໃຫ້ບັນລຸຕາມຄາດໝາຍ ແຕ່ດ້ານຄຸນນະພາບຍັງບໍ່ທັນສູງ.

- ການຈັດຕັ້ງການຮຽນ-ການສອນ ບໍ່ສອດຄ່ອງລະບຽບການ, ຮຽນບໍ່ຄົບຕາມຫຼັກສູດ ທີ່ກຳນົດໄວ້;
- ຄູສອນກໍບໍ່ຖືກກັບວຸດທິການສຶກສາ ແລະ ສິດສອນກໍບໍ່ກົງກັບວິຊາຮຽນຈົບມາ;
- ຫຼັກສູດການຮຽນ-ການສອນຊັ້ນມັດທະຍົມຕອນຕົ້ນບຳລຸງ ຍັງບໍ່ໄດ້ຮັບການປັງປຸງ;

7) ຫຼັກສູດຝຶກອົບຮົມວິຊາຊີບຂັ້ນພື້ນຖານບໍ່ທັນມີຫຼາກຫຼາຍສາຂາວິຊາ ໂດຍສະເພາະຫຼັກສູດທ້ອງຖິ່ນທີ່ຍັງບໍ່ທັນໄດ້ມີການພັດທະນາຢ່າງກວ້າງຂວາງເທົ່າທີ່ຄວນ.
   - ງົບປະມານໃນການສ້າງ ແລະ ພັດທະນາຫຼັກສູດໃໝ່ໆ ຍັງມີຈຳກັດ;
   - ຍັງບໍ່ໄດ້ມີການລົງເກັບກຳຂໍ້ມູນຄວາມຕ້ອງການທາງດ້ານວິຊາຊີບໃນແຕ່ລະທ້ອງຖິ່ນທີ່ຊັດເຈນ.
8) ການກວດກາ, ຕິດຕາມ ແລະ ປະເມີນຜົນ ວຽກງານການສຶກສານອກໂຮງຮຽນ ຍັງບໍ່ທັນເຮັດເປັນລະບົບຕໍ່ເນື່ອງ.
   - ບຸກຄະລາກອນການສຶກສານອກໂຮງຮຽນ ຍັງບໍ່ໄດ້ຮັບການຝຶກອົບຮົມ ກ່ຽວກັບການນຳໃຊ້ເຄື່ອງມືກວດກາ, ຕິດຕາມ ແລະ ປະເມີນຜົນ ຢ່າງທົ່ວເຖິງ.
9) ການເກັບກຳ ແລະ ການລາຍງານ ກ່ຽວກັບຂໍ້ມູນສະຖິຕິຜູ້ຮຽນ ແລະ ຄູສອນ ສຳລັບການສຶກສານອກໂຮງຮຽນ ຍັງບໍ່ຈະແຈ້ງ ແລະ ບໍ່ຊັດເຈນ.
   - ລະບົບການເກັບກຳຂໍ້ມູນສະຖິຕິ ຍັງບໍ່ໄດ້ຮັບການປັບປຸງໃຫ້ເປັນລະບົບທີ່ສົມບູນ, ຍັງບໍ່ທັນເຊື່ອມເຂົ້າກັບລະບົບຖານຂໍ້ມູນສຶກສາ ແລະ ກີລາ.
   - ກຸ່ມເປົ້າໝາຍຜູ້ຮຽນກະຈັດກະຈາຍ ແລະ ເຄື່ອນຍ້າຍໄປຕາມສະພາບຄວາມຕ້ອງການຂອງຕະຫຼາດແຮງງານ.
   - ການລາຍງານຂໍ້ມູນສະຖິຕິຜູ້ຮຽນ ແລະ ຄູສອນ ບໍ່ປະຕິບັດຕາມລະບຽບການທີ່ກຳນົດໄວ້.
10) ສູນການສຶກສານອກໂຮງຮຽນ ຫຼາຍແຫ່ງ ຍັງບໍ່ໄດ້ເຄື່ອນໄຫວກິດຈະກຳ ຕາມລະບຽບການ ແລະ ພາລະບົດບາດທີ່ກຳນົດໄວ້.
   - ງົບປະມານຮັບໃຊ້ໃນການຈັດຕັ້ງກິດຈະກຳການຮຽນ-ການສອນ ມີຈຳກັດ;
   - ຄູສອນ ແລະ ບຸກຄະລາກອນ ສຳລັບການສຶກສານອກໂຮງຮຽນ ບໍ່ພຽງພໍ;
   - ຄວາມຮູ້ຄວາມສາມາດ ແລະ ຄວາມເອົາໃຈໃສ່ ໃນດ້ານການບໍລິຫານ-ຄຸ້ມຄອງ ຂອງຜູ້ບໍລິຫານສູນການສຶກສານອກໂຮງຮຽນ ຫຼາຍແຫ່ງ ຍັງບໍ່ທັນສູງ;
   - ອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ ຍັງບໍ່ໃຫ້ຄວາມສຳຄັນຕໍ່ການພັດທະນາສູນການສຶກສານອກໂຮງຮຽນເທົ່າທີ່ຄວນ.
11) ການສະໜອງສື່ການຮຽນ-ການສອນ, ອຸປະກອນຮັບໃຊ້ໃນວຽກງານການສຶກສານອກໂຮງຮຽນ ຍັງບໍ່ທັນພຽງພໍ.
   - ຂາດເຂີນອຸປະກອນ ແລະ ສື່ການຮຽນ-ການສອນ.

2.2. ສິ່ງທ້າທ້າຍ

1) ປະຊາກອນກຸ່ມເປົ້າໝາຍທີ່ບໍ່ຮູ້ໜັງສື ສ່ວນຫຼາຍອາໄສຢູ່ເຂດຫ່າງໄກສອກຫຼີກ ແລະ ມີສະຖານະຄອບຄົວທີ່ທຸກຍາກ ຈຶ່ງເຮັດເຂົາເຈົ້າຍຶດຖືເອົາການທຳມາຫາກິນເປັນປັດໄຈສຳຄັນກວ່າການຮຽນໜັງສື.
2) ຮູບແບບໃນການຈັດການຮຽນ-ການສອນ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ, ຊັ້ນມັດທະຍົມ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຍັງບໍ່ສາມາດກຳນົດຮູບແບບທີ່ສອດຄ່ອງ ແລະ ເໝາະສົມໄດ້ ໃນຊ່ວງການລະບາດຂອງເຊື້ອພະຍາດ COVID-19.

3) ການຄິດໄລ່ອັດຕາການຮູ້ໜັງສື ຂອງປະຊາກອນລາວ ແລະ ດັດສະນີຄວາມສະພາບຍິງ-ຊາຍ ໃນການເຂົ້າເຖິງການສຶກສາທີ່ມີຄຸນນະພາບ ຍັງບໍ່ຊັດເຈນ.

4) ການຜັນຂະຫຍາຍດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ອອກມາເປັນແຜນຍຸດທະສາດ ຫຼື ແຜນການຈັດຕັ້ງປະຕິບັດອັນລະອຽດ ຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດ.

5) ການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານການສຶກສານອກໂຮງຮຽນ ຂອງອຳນາດການປົກຄອງທ້ອງຖິ່ນ ຍັງບໍ່ທັນສູງເທົ່າທີ່ຄວນ.

6) ການເພີ່ມງົບປະມານໃສ່ການພັດທະນາວຽກງານການສຶກສານອກໂຮງຮຽນ ຍັງຈຳກັດ.

3. ແຜນວຽກບຸລິມະສິດ ປະຈຳປີ 2021-2022

3.1. ຈຸດປະສົງ

1) ເພື່ອເພີ່ມອັດຕາການຮູ້ໜັງສື ຂອງປະຊາຊົນລາວບັນດາເຜົ່າ ແລະ ສົ່ງເສີມໃຫ້ກຸ່ມເປົ້າໝາຍໄດ້ສືບຕໍ່ຮຽນຈົບຊັ້ນມັດທະຍົມບຳລຸງ (ຈົບການສຶກສາຂັ້ນພື້ນຖານ) ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ສຳລັບທຸກຄົນ.

2) ເພື່ອສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ການສຶກສານອກໂຮງຮຽນ ໃນດ້ານທັກສະການບໍລິຫານ-ຄຸ້ມຄອງ ແລະ ການວາງແຜນ ຢ່າງມີປະສິດທິພາບສູງ.

3) ເພື່ອສົ່ງເສີມ ແລະ ພັດທະນາສູນການສຶກສານອກໂຮງຮຽນ ໃຫ້ກາຍເປັນສູນແຫ່ງການຮຽນຮູ້.

4) ເພື່ອພັດທະນາຮູບແບບການຮຽນ-ການສອນແບບໃໝ່ ທີ່ເໝາະສົມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ.

5) ເພື່ອສົ່ງເສີມການຝຶກອົບຮົມວິຊາຊີບ ທີ່ຫຼາກຫຼາຍຮູບແບບ ແລະ ການສ້າງທັກສະອາຊີບ ທີ່ກວມເອົາທັກສະສີມືແຮງງານ ແລະ ທັກສະຊີວິດ ໂດຍພັດທະນາໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

3.2. ຄາດໝາຍຫຼັກ

1) ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວເດັກ ອາຍຸ 6-14 ປີ ໄດ້ຮຽນຈົບຊັ້ນປະຖົມບຳລຸງ ໃຫ້ໄດ້ 3,250 ຄົນ.

2) ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ໄດ້ຮຽນຈົບລົບລ້າງຄວາມບໍ່ຮູ້ໜັງສື ໃຫ້ໄດ້ 2,600 ຄົນ.

3) ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ໄດ້ຮຽນຈົບຊັ້ນປະຖົມບຳລຸງ ໃຫ້ໄດ້ 2,940 ຄົນ.

4) ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-35 ປີ ໄດ້ຮຽນຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ໃຫ້ໄດ້ 16,800 ຄົນ.

5) ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍທີ່ປະລະການຮຽນຊັ້ນມັດທະຍົມ ໃຫ້ໄດ້ຮຽນຈົບຊັ້ນມັດທະຍົມຕອນປາຍບຳລຸງ ໃຫ້ໄດ້ 5,600 ຄົນ.

6) ຊຸກຍູ້ໃຫ້ປະກາດເປັນແຂວງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ໃຫ້ສຳເລັດ 2 ແຂວງທີ່ເຫຼືອ (ແຂວງໄຊສົມບູນ ແລະ ອັດຕະປື).

7) ສົ່ງເສີມການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ການສ້າງທັກສະອາຊີບ ທີ່ມີຫຼາກຫຼາຍຮູບແບບ ແລະ ຫຼາຍສາຂາວິຊາ ໃຫ້ກັບປະຊາກອນກຸ່ມເປົ້າໝາຍທີ່ສົນໃຈ ໃຫ້ໄດ້ 4,000 ຄົນ.

8) ຊຸກຍູ້ ໃຫ້ສ້າງສູນການສຶກສານອກໂຮງຮຽນ ຂັ້ນແຂວງ ໃຫ້ໄດ້ 1 ແຫ່ງ (ແຂວງໄຊສົມບູນ).

9) ລະບົບສະຖິຕິຖານຂໍ້ມູນການສຶກສານອກໂຮງຮຽນ ໄດ້ຖືກນຳໃຊ້ເພື່ອເກັບກຳຂໍ້ມູນສະຖິຕິ ຢ່າງເປັນທາງການ ແລະ ເອກະພາບກັນ ໃນທົ່ວປະເທດ.

3.3. ວຽກຈຸດສຸມປະຈຳສົກປີ

1) ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການຈັດຕັ້ງປະຕິບັດວຽກງານການຮຽນຮູ້ຕະຫຼອດຊີວິດ ທົ່ວສັງຄົມ.

2) ຊຸກຍູ້ ແລະ ສົ່ງເສີມ ປະຊາກອນກຸ່ມເປົ້າໝາຍນອກໂຮງຮຽນ (ໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ, ເດັກນ້ອຍ ອາຍຸ 6-14 ປີ) ໃຫ້ໄດ້ຮຽນຈົບຫຼັກສູດລົບລ້າງຄວາມບໍ່ຮູ້ໜັງສື ແລະ ຈົບຊັ້ນປະຖົມບຳລຸງ ຢ່າງທົ່ວເຖິງ ແລະ ເທົ່າທຽມກັນ ໂດຍບໍ່ຈຳແນກຄວາມແຕກຕ່າງ ທາງດ້ານເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ.

3) ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຫຼັກສູດການຮຽນຮູ້ໜັງສື, ບຳລຸງຍົກລະດັບການສຶກສາ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະອາຊີບ ຜ່ານສື່ຕ່າງໆ ທັງແບບອອນລາຍ (Online) ແລະ ແບບສື່ສິ່ງພິມ (Offline) ໃນຮູບແບບທີ່ເໝາະສົມກັບກຸ່ມເປົ້າໝາຍ ແລະ ເງື່ອນໄຂຂອງທ້ອງຖິ່ນ.

4) ພັດທະນາລະບຽບການ ແລະ ກົນໄກ ກ່ຽວກັບການຈັດການຮຽນ-ການສອນ ລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ທີ່ແທດເໝາະກັບສະພາບຄວາມເປັນຈິງໃນປະຈຸບັນ ໂດຍຜ່ານສູນການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຊຸມຊົນ.

5) ສ້າງ ແລະ ພັດທະນາຫຼັກສູດການຝຶກອົບຮົມໄລຍະສັ້ນ ທີ່ມີເນື້ອໃນກ່ຽວກັບການຮຽນຮູ້ໜັງສື ແລະ ວິຊາຊີບຂັ້ນພື້ນຖານໃນສາຂາຕ່າງໆ ໂດຍຮູບແບບອອນລາຍ ໂດຍອີງໃສ່ສະພາບເງື່ອນໄຂຂອງທ້ອງຖິ່ນ ແລະ ສະພາບຄວາມຕ້ອງການຂອງຕະຫຼາດແຮງງານ ໃນແຕ່ລະໄລຍະ.

6) ພັດທະນາລະບົບການຄຸ້ມຄອງສະຖິຕິຂໍ້ມູນຂ່າວສານ ການສຶກສານອກໂຮງຮຽນ ແບບອອນລາຍ ເພື່ອເຊື່ອມໂຍງກັບລະບົບຖານຂໍ້ມູນ ແລະ ລະບົບການກວດກາ, ການຕິດຕາມ ແລະ ປະເມີນຜົນ ຂອງກະຊວງສຶກສາທິການ ແລະ ກີລາ.

7) ພັດທະນາມາດຕະຖານ ແລະ ປະກັນຄຸນນະພາບ ການຝຶກວິຊາຊີບຂັ້ນພື້ນຖານ, ທັກສະອາຊີບ ສຳລັບການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໄສ ເພື່ອໃຫ້ສາມາດທຽບເທົ່າ, ທຽບໂອນ, ຮັບຮູ້ ແລະ ຢັ້ງຢືນຜົນການຮຽນຮູ້ ຕາມຂອບວຸດທິການສຶກສາແຫ່ງຊາດ.

8) ສ້າງນະໂຍບາຍ, ລະບຽບການ ແລະ ມາດຕະຖານ ໃນພັດທະນາສູນການສຶກສານອກໂຮງຮຽນ ໃຫ້ເປັນສູນແຫ່ງການຮຽນຮູ້.

9) ປັບປຸງລະບຽບການບໍລິຫານ-ຄຸ້ມຄອງ ແລະ ການບໍລິການ ຂອງສູນການສຶກສານອກໂຮງຮຽນຂັ້ນຕ່າງໆ. ລວມທັງສະຖານຈັດການຮຽນ-ການສອນ ໃຫ້ເປັນທີ່ດຶງດູດ ແລະ ເປັນທີ່ສົນໃຈ ສຳລັບກຸ່ມເປົ້າໝາຍຂອງການສຶກສານອກໂຮງຮຽນ, ຊຸມຊົນ ແລະ ສັງຄົມ ສາມາດເຂົ້າເຖິງໄດ້ສະດວກ ແລະ ມີຄຸນນະພາບ.

10) ສ້າງຄວາມເຂັ້ມແຂງ ໃນດ້ານການບໍລິຫານ-ຄຸ້ມຄອງ, ການບໍລິການ, ການນຳໃຊ້ເຄື່ອງມືກວດກາ, ຕິດຕາມ ແລະ ປະເມີນຜົນ ໃຫ້ບຸກຄະລາກອນ ການສຶກສານອກໂຮງຮຽນ ຂັ້ນສູນກາງ ແລະ ທ້ອງຖິ່ນ.

11) ສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະໃຫ້ແກ່ຄູຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະດ້ານວິຊາຊີບໃນສາຂາຕ່າງໆ ເພື່ອແນ່ໃສ່ໃຫ້ສາມາດຈັດຝຶກອົບຮົມ ໃຫ້ໄປຕາມມາດຕະຖານຂອດວຸດທິການສຶກສາແຫ່ງຊາດ.

12) ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສະຖິຕິການສຶກສານອກໂຮງຮຽນ ກ່ຽວກັບການເກັບກຳຂໍ້ມູນ, ການປ້ອນຂໍ້ມູນ, ການນຳໃຊ້ ແລະ ການບຳລຸງຮັກສາລະບົບຖານຂໍ້ມູນ ການສຶກສານອກໂຮງຮຽນ ຂັ້ນສູນກາງ ແລະ ທ້ອງຖິ່ນ.

3.4. ຄາດຄະເນງົບປະມານ

ຄາດຄະເນງົບປະມານ ປະຈຳສົກປີ 2021-2022 ທີ່ຈະນຳໃຊ້ໃນການພັດທະນາການສຶກສານອກໂຮງຮຽນ ເພື່ອໃຫ້ບັນລຸຜົນສຳເລັດ ຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ກຳນົດໄວ້ ຢ່າງມີປະສິດທິພາບ ແມ່ນປະມານ 2,435 ລ້ານກີບ[3].

3.5. ມາດຕະການຈັດຕັ້ງປະຕິບັດ

1) ໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ນຳເອົາວຽກງານຈຸດສຸມນີ້ໄປຜັນຂະຫຍາຍເປັນແຜນປະຕິບັດງານລະອຽດ ໂດຍກຳນົດກິດຈະກຳ, ຜົນໄດ້ຮັບ, ໄລຍະຈັດຕັ້ງປະຕິບັດ, ຜູ້ຮັບຜິດຊອບ ແລະ ງົບປະມານຮັບໃຊ້.

2) ໃຫ້ພາກສ່ວນກ່ຽວຂ້ອງ/ພະແນກສຶກສາທິການ ແລະ ກີລາ ເອົາໃຈໃສ່ຊີ້ນຳ, ນຳພາ ສູນການສຶກສານອກໂຮງຮຽນແຕ່ລະຂັ້ນ ແລະ ບັນດາຫ້ອງການສຶກສາທິການ ແລະ ກີລາ ເມືອງ ໃນການຫັນເອົາກິດຈະກຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

3) ໃຫ້ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນກົມການສຶກສານອກໂຮງຮຽນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດຕາມມະຕິກອງປະຊຸມຜູ້ບໍລິຫານການສຶກສານອກໂຮງຮຽນ ແລະ ຕາມແຜນພັດທະນາການສຶກສານອກໂຮງຮຽນ ປະຈຳສົກປີ ເພື່ອໃຫ້ບັນລຸຕາມຄາດໝາຍ.

ນະຄອນຫຼວງວຽງຈັນ, ວັນທີ 29 ພຶດສະພາ 2021

ກົມການສຶກສານອກໂຮງຮຽນ

ສີຊຸພນະ ບຸບຜາ

[3] ລາຍລະອຽດງົບປະມານຄັດຕິດໃນເອກະສານຊ້ອນທ້າຍ